ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 01904/ກພສ
ນະຄອນຫຼວງວຽງຈັນ, ວັນທີ 20 APR 2018

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດຕັ້ງປະຕິບັດໜ່ວຍງານກວດກາຕູ້ຄອນເທນເນີ Container Control Unit (CCU) ທີ່ ດ່ານພາສີສາກົນຂົວມິດຕະພາບ I

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍພາສີ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.
- ອີງຕາມ ຂໍ້ຕົກລົງ ຂອງຫົວໜ້າກົມພາສີ ສະບັບເລກທີ 1179/ກພສ, ລົງວັນທີ 15 ມີນາ 2018 ວ່າດ້ວຍໜ້າ ທີ່ ແລະ ແບບແຜນວິທີເຮັດວຽກຂອງຂະແໜງໃນກອງຄຸ້ມຄອງພາສີ, ໜ່ວຍງານໃນກອງກວດກາພາສີປະຈຳ ແຂວງ ແລະ ໜ່ວຍງານຂອງດ່ານພາສີຊາຍແດນ.
- ອີງຕາມ ຂໍ້ຕົກລົງ ທ່ານລັດຖະມົນຕີກະຊວງການເງິນ ວ່າດ້ວຍການອະນຸມັດດຳເນີນໂຄງການກວດກາຕູ້ຄອນ ເທນເນີ, ສະບັບເລກທີ 3662/ກງ, ລົງວັນທີ 20 ຕຸລາ 2017.

### ຫົວໜ້າກົມພາສີ ຕົກລົງ:

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດໜ້າທີ່ ແລະ ແບບແຜນວິທີເຮັດວຽກ ຂອງໜ່ວຍງານກວດກາຕູ້ຄອນ ເທນເນີຂອງດ່ານພາສີສາກົນຂົວມິດຕະພາບ I ແນໃສ່ ເພື່ອຜັນຂະຫຍາຍ, ຈັດຕັ້ງປະຕິບັດໂຄງການ ຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນ ວ່າດວ້ຍການອະນຸມັດດຳເນີນໂຄງການກວດກາຕູ້ຄອນເທນເນີ້, ສະບັບເລກທີ 3662/ກງ, ລົງວັນທີ 20 ຕຸລາ 2017 ແມ່ນເພື່ອດຳເນີນການຄຸ້ມຄອງຄວາມສ່ຽງຂອງຕູ້ຄອນເທນເນີທີ່ ນຳເຂົ້າ, ສົ່ງອອກ ແລະ ຜ່ານແດນ ສປປລາວ ລວມທັງການກວດກາ, ປົກປ້ອງສັງຄົມຈາກໄພຢາເສບຕິດ ແລະ ອາຊະຍາ

ກໍາຂ້າມຊາດ, ຕ້ານ ແລະ ສະກັດກັ້ນການລັກລອບສິນຄ້າທີ່ຜິດກົດໝາຍທຸກໆຊະນິດທີ່ເຄື່ອນຍ້າຍໃນຮູບແບບຕ່ອງໂສ້ການສະໜອງການຂົນສົ່ງດ້ວຍຕູ້ຄອນເທນເນີ ທີ່ມີຂໍ້ມູນ ແລະ ຄວາມສົງໃສວ່າ ຈະມີການບັນຈຸສິນຄ້າທີ່ຜິດກົດໝາຍເຊັ່ນ ຢາເສບຕິດ, ສານເຄມີຕົ້ນຜະລິດຢາເສບຕິດ ແລະ ອາວຸດທໍາລາຍລ້າງສູງ, ອຸປະກອນທີ່ໃຊ້ຜະລິດນິວເຄຼຍ ແລະ ອື່ນໆ ໃຫ້ມີປະສິດທິຜົນ ແລະ ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

ມາດຕາ 2. ພາລະບົດບາດຂອງເຈົ້າໜ້າທີ່ປະຈໍາໜ່ວຍງານກວດກາຕູ້ຄອນເທນເນີ (CCU)

1. ສຶກສາລະບຽບຕ່າງໆ, ຕິດຕາມຂ່າວສານປະຈໍາວັນ ແລະ ຄົ້ນຄວ້າຈາກແຫຼ່ງຂໍ້ມູນຕ່າງໆ ເພື່ອກໍານົດເງື່ອນໄຂຄວາມສ່ຽງ ແລະ ຄວາມເປັນໄປໄດ້ໃນການກະທໍາຜິດ.
2. ວິເຄາະຂໍ້ມູນຈາກລະບົບອີເລັກໂຕຼນິກ ແລະ ເອກະສານທົ່ວໄປ ທີ່ກ່ຽວຂ້ອງກັບການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ (ນໍາເຂົ້າ, ສົ່ງອອກ ແລະ ຜ່ານແດນ).
3. ດໍາເນີນການວິເຄາະ, ວິໄຈຂໍ້ມູນ ເອກະສານປະກອບການແຈ້ງພາສີ ແລະ ອື່ນໆທີ່ກ່ຽວຂ້ອງ ເພື່ອສະໜອງຂໍ້ມູນເຂົ້າໃນລະບົບຖານຂໍ້ມູນຄວາມສ່ຽງ ໃນການກໍານົດເປົ້າໝາຍກວດກາສິ່ງທີ່ຜິດລະບຽບກົດໝາຍ.
4. ກວດກາສິນຄ້າ ແລະ ຕູ້ຄອນເທນເນີ ທີ່ບັນຈຸສິນຄ້າ, ເຄື່ອງຂອງທີ່ມີຄວາມສ່ຽງ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານການແຈ້ງ ພ້ອມທັງປະເມີນຄ່າພາສີ-ອາກອນຕາມລະບຽບກົດໝາຍພາສີ.
5. ປະສານງານກັບໜ່ວຍງານທີ່ກ່ຽວຂ້ອງພາຍໃນດ່ານເພື່ອດໍາເນີນການກວດກາສິນຄ້າຕົວຈິງຕາມຂໍ້ມູນທີ່ສົງໃສຮ່ວມກັນ.

ມາດຕາ 3. ຫຼັກການຈັດຕັ້ງປະຕິບັດ

1. ດໍາເນີນການວິເຄາະຄວາມສ່ຽງ, ຈັດປະເພດຄວາມສ່ຽງ ແລະ ດໍາເນີນຂັ້ນຕອນການແຈ້ງພາສີຕາມລະບຽບການ.
2. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ແລກປ່ຽນຂໍ້ມູນຂ່າວສານ, ແຫຼ່ງຂ່າວເພື່ອນໍາໃຊ້ຫຼັກການບໍລິຫານຄວາມສ່ຽງ ຕາມທີ່ກົດໝາຍວ່າດ້ວຍພາສີ.
3. ກວດກາຂໍ້ມູນການແຈ້ງພາສີແບບເອເລັກໂຕຼນິກ ແລະ ແບບທົ່ວໄປທີ່ມີການຮັບຮອງການແຈ້ງພາສີເປັນລາຍລະອຽດ.
4. ຫົວໜ້າດ່ານພາສີສາກົນຂົວມິດຕະພາບ I ເປັນຜູ້ໃຫ້ທິດຊີ້ນໍາແກ່ ເຈົ້າໜ້າທີ່ພາສີ ທີ່ປະຈໍາຢູ່ໜ່ວຍງານກວດກາຕູ້ຄອນເທນເນີ ເປັນປະຈໍາ, ປະສານກັບເຈົ້າໜ້າທີ່ປະຈໍາດ່ານຂົວມິດຕະພາບ ແລະ ຂະແໜງການທີ່ກ່ຽວຂ້ອງປະຕິບັດຕາມກົດໝາຍຂອງ ສປປລາວ ແລະ ລະບຽບການສາກົນ.
5. ສາມາດກວດກາສິນຄ້າ ແລະ ຕູ້ຄອນເທນເນີ ທີ່ມີຄວາມສ່ຽງສູງ ໃນສະຖານທີ່ປອດໄພ ແລະ ລະບົບສາງທີ່ລັດຖະການພາສີກໍານົດ; ໃນກໍລະນີທີ່ພົບເຫັນ ສິນຄ້າ ແລະ ຕູ້ຄອນເທນເນີ ທີ່ບັນຈຸ ສິນຄ້າ, ເຄື່ອງຂອງທີ່ຕ້ອງສົງໃສ, ເຈົ້າໜ້າທີ່ພາສີຈະຕ້ອງໄດ້ ດໍາເນີນຂັ້ນຕອນການກວດກາຕົວຈິງ ແລ້ວລາຍງານຜົນການກວດກາໃຫ້ຫົວໜ້າດ່ານຮັບຊາບ ເພື່ອພິຈາລະນາ.
6. ກວດກາຕົວຈິງ ຕາມຫຼັກການພາສີ ແລະ ນໍາໃຊ້ເຄື່ອງມືກວດກາ ເຊັ່ນ ເຄື່ອງສະແກນເນີ ຫຼື ອຸປະກອນຮັບໃຊ້ການກວດກາໃນທຸກຮູບແບບ ແລະ ວິທີການອື່ນໆ.

7. ເຈົ້າໜ້າທີ່ພາສີຜູ້ຖືກແຕ່ງຕັ້ງປະຈຳໜ່ວຍງານກວດກາຕູ້ຄອນເທນເນີ ຕ້ອງມີວິທີດຳເນີນການກວດກາທີ່ເໝາະສົມເພື່ອບໍ່ໃຫ້ເປັນການກີດຂວາງການອຳນວຍຄວາມສະດວກທາງການຄ້າ, ການກວດກາຕົວຈິງ ຕ້ອງດຳເນີນການຕາມຂັ້ນຕອນ ແລະ ໃຫ້ສຳເລັດຕາມລະບຽບການກຳນົດ.

## ມາດຕາ 4. ເງື່ອນໄຂການກວດກາ

1. ການກວດກາສິນຄ້າ ແລະ ຕູ້ຄອນເທນເນີ ຕ້ອງດຳເນີນການຊ່ອງໜ້າກັບເຈົ້າຂອງສິນຄ້າ ຫຼື ຜູ້ທີ່ໄດ້ຮັບມອບສິດ ໂດຍເຈົ້າໜ້າທີ່ພາສີໜ່ວຍງານກວດກາຕູ້ຄອນເທນເນີຕາມການແຕ່ງຕັ້ງຂອງຄະນະດ່ານ.
2. ການກວດກາສິນຄ້າ ແລະ ຕູ້ຄອນເທນເນີ ຕ້ອງໄດ້ມີການກະກຽມເອກະສານ ແລະ ຂໍ້ມູນຄົບຖ້ວນ ລວມທັງມີການເກັບກຳຮູບພາບ, ຜົນການກວດກາ, ນຳໃຊ້ຮູບແບບຕາຕະລາງເພື່ອເກັບກຳສະຖິຕິເພື່ອການວິເຄາະຄວາມສ່ຽງໃນອານາຄົດ.
3. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງຄະນະດ່ານຢ່າງເຂັ້ມງວດ ແລະ ທັນກຳນົດເວລາ.

## ມາດຕາ 5. ການຮັກສາຄວາມລັບທາງລັດຖະການ

ທຸກເອກະສານທີ່ດຳເນີນການ ວິເຄາະຂໍ້ມູນ, ຜົນການກວດກາ, ມາດຕະການທາງພາສີ ຫຼື ຂໍ້ມູນທາງລັດຖະການອື່ນໆ ຂອງໜ່ວຍງານກວດກາຕູ້ຄອນເທນເນີໃຫ້ຖືເປັນຄວາມລັບ, ບໍ່ອະນຸຍາດເຜີຍແຜ່ໃຫ້ແກ່ພາຍນອກ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ຈາກຂັ້ນເທິງ.

## ມາດຕາ 6. ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນຂອງໜ່ວຍງານກວດກາຕູ້ຄອນເທນເນີແມ່ນໂຄງປະກອບກົງຈັກຊ່ວຍວຽກດ່ານພາສີສາກົນຂົວມິດຕະພາບ I, ກອງຄຸ້ມຄອງພາສີ V, ປະຕິບັດຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ ແລະ ຂໍ້ຕົກລົງ ຂອງຫົວໜ້າກົມພາສີ ສະບັບເລກທີ 1179/ກພສ, ລົງວັນທີ 15 ມີນາ 2018 ວ່າດ້ວຍໜ້າທີ່ ແລະ ແບບແຜນວິທີເຮັດວຽກຂອງຂະແໜງໃນກອງຄຸ້ມຄອງພາສີ, ໜ່ວຍງານໃນກອງກວດກາພາສີປະຈຳແຂວງ ແລະ ໜ່ວຍງານຂອງດ່ານພາສີຊາຍແດນ.

ໜ່ວຍງານກວດກາຕູ້ຄອນເທນເນີປະກອບດ້ວຍເຈົ້າໜ້າທີ່ພາສີປະຈຳການ 01 ຫາ 05 ທ່ານ ສາມາດເພີ່ມ ຫຼື ຫຼຸດລົງ ຂຶ້ນກັບເງື່ອນໄຂ ແລະ ບໍລິມາດວຽກຕົວຈິງ ເພື່ອຄວບຄຸມຄວາມສ່ຽງ, ກວດກາສິນຄ້າ ແລະ ຕູ້ຄອນເທນເນີສິນຄ້າເຄື່ອງຂອງ ນຳເຂົ້າ, ສົ່ງອອກ ແລະ ຜ່ານແດນຕາມລະບຽບການ.

ໜ່ວຍງານກວດກາຕູ້ຄອນເທນເນີ ແມ່ນມີ ຄະນະຊີ້ນຳໂຄງການເຊິ່ງປະກອບດ້ວຍ:

- ຫົວໜ້າກົມພາສີ
- ຫົວໜ້າຄະນະກຳມະການແຫ່ງຊາດເພື່ອກວດກາ ແລະ ຄວບຄຸມຢາເສບຕິດ
- ຜູ້ປະສານງານລະດັບຊາດ UNODC

K

ໜ່ວຍງານປະຕິບັດງານຕົວຈິງມີໜ້າທີ່ລາຍງານດ່ານພາສີສາກົນ, ກອງຄຸ້ມຄອງພາສີ V ເພື່ອລາຍງານຕໍ່ຄະນະຊີ້ນຳໂຄງການ ເປັນແຕ່ລະໄຕມາດ, ຄະນະຊີ້ນຳໂຄງການຈະຕ້ອງໄດ້ມີການກຳນົດປະຊຸມສ່ອງແສງປຶກສາຫາລື ທຸກ 06 ເດືອນ ເພື່ອປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງໂຄງການ Customs Container Programme (CCP), ແກ້ໄຂບັນຫາສິ່ງທ້າທາຍ ແລະ ພັດທະນາວຽກງານໃຫ້ດີຂຶ້ນ.

**ມາດຕາ 7. ລະບົບການຕິດຕາມ ແລະ ລາຍງານ**

1. ເຈົ້າໜ້າທີ່ພາສີຜູ້ຖືກແຕ່ງຕັ້ງໃຫ້ຮັບຜິດຊອບຢູ່ໜ່ວຍງານກວດກາຕູ້ຄອນເທນເນີຕ້ອງໄດ້ລາຍງານຜົນການປະຕິບັດໜ້າທີ່ ກ່ຽວກັບການກວດກາສິນຄ້າ ແລະ ຕູ້ຄອນເທນເນີ, ບັນຫາຂໍ້ຫຍຸ້ງຍາກ ສິ່ງທ້າທາຍ ລວມທັງການພົບເຫັນການກະທຳຜິດ ແລະການຍຶດສິນຄ້າທີ່ຜິດກົດໝາຍເປັນປະຈຳໃຫ້ແກ່ ຫົວໜ້າດ່ານພາສີສາກົນຂົວມິດຕະພາບ I, ກອງຄຸ້ມຄອງພາສີ V.
2. ໃນກໍລະນີຈຳເປັນໃນການປະຕິບັດໜ້າທີ່ ສາມາດປະສານສົມທົບກັບດ່ານພາສີສາກົນຂົວມິດຕະພາບ I, ກອງຄຸ້ມຄອງພາສີ V ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອໃຫ້ການຮ່ວມມືໃນການປະຕິບັດວຽກງານຢ່າງມີປະສິດທິຜົນ.
3. ຫົວໜ້າດ່ານພາສີສາກົນຂົວມິດຕະພາບ I ກວດກາລາຍງານໃຫ້ ກອງຄຸ້ມຄອງພາສີ V ປະຈຳວັນ ແລະ ອາທິດເພື່ອສັງລວມ ລາຍງານຕໍ່ກົມພາສີ ປະຈຳອາທິດ, ເດືອນ, ງວດ ແລະ ປີ ເພື່ອລາຍງານຕໍ່ ຄະນະຊີ້ນຳໂຄງການ CCP.
4. ສະຫຼຸບ, ສັງລວມ ແລະ ລາຍງານ ສະພາບການເຄື່ອນໄຫວການຈັດຕັ້ງປະຕິບັດໂຄງການກວດກາຕູ້ຄອນເທນເນີ CCP ເພື່ອລາຍງານຕໍ່ຂັ້ນເທິງ ຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 8. ການຜັນຂະຫຍາຍການຈັດຕັ້ງປະຕິບັດ**

ມອບໃຫ້ຫົວໜ້າກອງຄຸ້ມຄອງພາສີ V, ດ່ານພາສີສາກົນຂົວມິດຕະພາບ I, ຂະແໜງ ແລະ ໜ່ວຍງານຂອງດ່ານພາສີຊາຍແດນ ຈັດຕັ້ງຜັນຂະຫຍາຍ, ດຳເນີນການເຜີຍແຜ່ແນະນຳໃຫ້ພະນັກງານ ແລະ ເຈົ້າໜ້າທີ່ພາສີທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນເພື່ອກຳແໜ້ນ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ຮັບປະກັນຜົນສຳເລັດຕາມລະດັບຄາດໝາຍ. ມອບໃຫ້ທຸກພາກສ່ວນຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 9. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນຳໃຊ້ ແລະ ຈັດຕັ້ງປະຕິບັດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປຈົນກວ່າຈະມີຂໍ້ຕົກລົງສະບັບໃໝ່ມາປ່ຽນແທນ.

**ຮັກສາການຫົວໜ້າກົມພາສີ**

ກະຊວງ ການເງິນ
ກົມພາສີ

ບຸນປະເສີດ ສີກຸນລະບຸດ

ໂຄງຮ່າງການຈັດຕັ້ງໂຄງການ CCU ທີ່ ດ່ານພາສີສາກົນຂົວມິດຕະພາບ I.

